# ເອົາຄວາມຢ້ານ ຕໍ່ສູ້ຄວາມຢ້ານ

( ອ່ານພຣະທັມ ເພງສັນລະເສີນ 34:4-11, 9 )

---

"ໄພ່ພົນທຸກຄົນຂອງພຣະຜູ້ເປັນເຈົ້າຈົ່ງຢ້ານຢຳພຣະອົງ ຜູ້ທີ່ຢຳເກງພຣະອົງຈະໄດ້ຮັບທຸກສິ່ງ ຕາມທີ່ເຂົາຕ້ອງການ" (ເພງສັຣເສີນ 34:9 )

---

ລູກສາວຂອງຜູ້ມີຊື່ສຽງໂດ່ງດັງກ່ຽວກັບການຄວບຄຸມອາຊຍາກັມທ່ານນຶ່ງ ໃນເມືອງຊິຄາໂກໄດ້ຂຽນປຶ້ມເຫຼັ້ມນຶ່ງຂຶ້ນ ກ່ຽວກັບຄວາມຢ້ານກົວທີ່ຫຼອກຫຼອນພໍ່ຂອງນາງ ຢ່າງບໍ່ມີວັນຈະຈືດຈາງ. ຕໍ່ມາລາວໄດ້ຕາຍ ໄປ ໂດຍທີ່ບໍ່ຮູ້ວ່າລາວ ຢ້ານກົວອັນໃດກັນແທ້.

ຫຼາຍຄົນດຳຣົງຊີວິດຂອງຕົນດ້ວຍຄວາມຢ້ານກົວ ແລະກໍເປັນຄວາມຈິງທີ່ຄວາມຢ້ານກົວນັ້ນເໝືອນກັບຄວາມຢ້ານ ກົວຂອງຊາຍທີ່ນຳມາເລົ່າໃນເຣື່ອງນີ້. ເຖິງແມ່ນວ່າຊີວິດຂອງລາວຈະເປັນຄົນດີ ມີສິນທັມແຕ່ລາວກໍຍັງມີຄວາມ ຢ້ານກົວ. ໃຫ້ເຮົາຄິດເບິ່ງກໍຣະນີຂອງກະສັດດາວິດ ຜູ້ຂຽນພຣະທັມເພງສັຣເສີນ ບົດທີ 34, ກະສັດດາວິດມີເຫດ ຜົນພຽງພໍທີ່ຈະຢ້ານກົວ ເພາະວ່າພຣະອົງຊົງຖືກຄົນອື່ນ ປອງຮ້າຍຕິດຕາມຂ້າພຣະອົງ, ແຕ່ເຖິງປານນັ້ນ, ປະສົບ ການຊີວິດຂອງກະສັດດາວິດຍັງໄດ້ຊ່ອຍພວກເຮົາໃຫ້ຮູ້ຈັກທາງອັນຖືກຕ້ອງ ໃນການແກ້ໄຂບັນຫາເຣື່ອງຄວາມ ຢ້ານກົວ.

ເຮົາສາມາດຕໍ່ສູ້ກັບໄຟໄດ້ສັນໃດ, ເຮົາກໍສາມາດໃຊ້ຄວາມຢ້ານກົວຂອງເຮົາຕໍ່ສູ້ກັບຄວາມຢ້ານກົວໄດ້ສັນນັ້ນ. ກະສັດ ດາວິດໄດ້ເຕືອນສະຕິຜູ້ອ່ານພຣະທັມເພງສັຣເສີນວ່າ ຜູ້ໃດກໍຕາມທີ່ຢ້ານຢຳອົງພຣະຜູ້ເປັນເຈົ້າກ່ອນສິ່ງອື່ນທັງໝົດ ພຣະອົງຈະຊ່ອຍເຫຼືອລາວບໍ່ໃຫ້ຢ້ານກົວຕໍ່ສິ່ງໃດໆ ທັງປວງ, ແລະລາວຈະພົບວ່າ ລາວໄດ້ຮັບສິດພິເສດຈາກພຣະເຈົ້າ ແລະເປັນທີ່ຮັກແພງແກ່ຄົນທົ່ວໄປ ໃນໂລກນີ້. "ພວກທ່ານຈະພົບດ້ວຍຕົນເອງວ່າພຣະຜູ້ເປັນເຈົ້າຊົງດີພຽງໃດ ຄວາມ ສຸກເປັນຂອງຜູ້ທີ່ສແວງຫາຄວາມປອດພັຍໃນພຣະອົງ" (ເພງສັຣເສີນ 34: 8 ).

ທ່ານກຳລັງສແວງຫາຄວາມປອດພັຍຖ້າມກາງໂລກ ທີ່ເຕັມໄປດ້ວຍຄວາມຢ້ານກົວແມ່ນບໍ່? ບໍ່ມີທາງໃດດອກ ຈະດີ ໄປກວ່າການດຳຣົງຊີວິດຂອງທ່ານແຕ່ລະວັນດ້ວຍຄວາມຢ້ານຢຳໃນພຣະເຈົ້າ. ຄືຄວາມໂຄຣົບນັບຖື ທີ່ຖືກສ້າງຂຶ້ນ ເພື່ອສແວງຫາການມອບນ້ອມຍອມເຊື່ອຟັງພຣະອົງ.

---

ຜູ້ໃດທີ່ຢ້ານຢຳ ອົງພຣະຜູ້ເປັນເຈົ້າ ລາວຈະຢ້ານມະນຸດດ້ວຍກັນ ໜ້ອຍລົງ.

---

ຮຽບຮຽງຈາກ ອາວເດລີເບຣດ